ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໜັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່ ເລກທີ .3184.../ທຄຕລ.2025

ນະຄອນຫຼວງວຽງຈັນ, ວັນທີ 14 OCT 2025

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ/ຫ້າງຮ້ານຕົວແທນຈຳໜ່າຍສິນຄ້າເຄື່ອງທີ່ລະນຶກ ຢູ່ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາເຄື່ອງທີ່ລະນຶກ ຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາຜູ້ສະໜອງ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາຜະລິດເຄື່ອງທີ່ລະນຶກ ປະຈຳປີ 2026 ໃຫ້ ທຄຕລ ດັ່ງມີລາຍການລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ / ຮູບພາບ |
|---|---|---|
| 1 | **ເສື້ອໂປໂລ**<br>- ເນື້ອຜ້າ 80% Polyester, 20% Spandex<br>- ປັກແສ່ວໂລໂກ້ ດ້ານໜ້າ 01 ຈຸດ, ຫຼັງ 01 ຈຸດ.<br>- ແຍກ Size ຍິງ-ຊາຍ.<br>- ການຫຸ້ມຫໍ່: 10 ຜືນ/ມັດ, 10 ມັດ/ແກັດ. ລະບຸເບີເສື້ອ ໃສ່ດ້ານນອກ ຂອງທຸກໆແກັດ. | **4,800 ຜືນ**  |

**ໝາຍເຫດ:**

1. ສາມາດເຂົ້າມາເບິ່ງຕົວຢ່າງ ຫຼື ຫາກຕ້ອງການຟາຍຮູບເພີ່ມຕື່ມ ສາມາດພົວພັນໄດ້ທີ່ ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C ແຕ່ວັນນີ້ ຈົນເຖິງທີ 28/10/2025 ໃນໂມງລັດຖະການ.
2. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກ ແຍກເປັນແຕ່ລະລາຍການ.
3. ການຄັດເລືອກຜູ້ສະໜອງແມ່ນ ຈະຄັດເລືອກຈາກຫຼາຍເງື່ອນໄຂ (ບໍ່ໄດ້ຄັດເລືອກຈາກລາຄາພຽງຢ່າງດຽວ).

➢ **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຮ່ວມຍື່ນຊອງປະມູນຕ້ອງປະກອບເອກະສານ ດັ່ງນີ້:**

***ເອກະສານຊອງທີ 1**:

1.1 ປະກອບເອກະສານໃບນາມນິຕິບຸກຄົນ ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປະຈຳປີ 2022, 2023, 2024 (ຕ້ອງເປັນບໍລິສັດທີ່ເຂົ້າລະບົບອາກອນມູນຄ່າເພີ່ມ).

1.2 ຜູ້ສະໜອງຕ້ອງລະບຸລາຍລະອຽດສິນຄ້າ ພ້ອມທັງລະບຸເງື່ອນໄຂຕ່າງໆໃຫ້ຄົບຖ້ວນ ແລະ ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນີ້, ແຫຼ່ງຜະລິດສິນຄ້າ, ລະບຸໄລຍະເວລາໃນການຮັບປະກັນ, ລະບຸໄລຍະການຜະລິດ, ຜົນງານຜ່ານມາທີ່ເຄີຍສະໜອງສິນຄ້າປະເພດດັ່ງກ່າວໃຫ້ພາກສ່ວນອື່ນ (ຕາມແບບຟອມຄັດຕິດແຈ້ງເຊີນ).

1.3 ເອກະສານ ຂໍ້ 1.1 ແລະ 1.2 ແມ່ນສົ່ງຟາຍ pdf ເຂົ້າ Email: procurement@bcel.com.la, **ສິນຄ້າຕົວຢ່າງ (ສະເປັກຖືກຕ້ອງພ້ອມປັກແສ່ວຕາມ Artwork BCEL) ທີ່ຈະເຂົ້າຮ່ວມປະມູນ** ແມ່ນໃຫ້ມາສົ່ງກ່ອນ ວັນພຸດ, ທີ 29/10/2025 ເວລາ 11:00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

***ເອກະສານຊອງທີ 2 (ປິດຊອງ)**:

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນ ເພື່ອເຂົ້າມາຍື່ນຊອງລາຄາ ໃນວັນຄານ, ທີ **11/11/2025 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.

2.2 ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ.

2.3 ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ ດ້ວຍໜັງສືຄໍ້າປະກັນທີ່ອອກ ໂດຍທະນາຄານພາຍໃນປະເທດ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 30/01/2026) ຫຼື ແຊັກທີ່ວີຊ້າແລ້ວ (ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສືຄໍ້າປະກັນດັ່ງກ່າວຄືນໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສໍາລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນຈະສົ່ງຄືນຫຼັງຈາກສົ່ງສິນຄ້າໃຫ້ ທຄຕລ ຖືກຕ້ອງຄົບຖ້ວນ.

2.4 ຖ້າຜູ້ສະໜອງບໍ່ວາງເງິນຄໍ້າປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຍື່ນຊອງໃບສະເໜີລາຄາ.

**ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກໍານົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງມີຄວາມສາມາດຈັດສົ່ງສິນຄ້າ ຈໍານວນທັງໝົດສໍາເລັດພາຍໃນ 50 ວັນ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທໍານຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊໍາລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນ ມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອໍານວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ບາລິນ ສີລະວົງສິດ

ຕິດຕໍ່ສອບຖາມຂໍ້ມູນເພີ່ມຕື່ມ:
021 213200 ຕໍ່ 414

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ………../ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງ ສິ່ງພິມໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ (ທີ່ຈະເຂົ້າປະມູນໃນຄັ້ງນີ້) | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ພາຍໃນ ຫຼື ຕ່າງປະເທດ (ລະບຸປະເທດ) | …. ປີ | ສົ່ງຕົວຢ່າງ….ວັນ<br>ສົ່ງທັງໝົດ….ວັນ | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ..........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ:




# 01

## ເສື້ອ ໂປໂລ ສຳລັບພະນັກງານ

- ✓ ສວມໃສ່ ເພື່ອຄວາມເປັນເອກະລັກ ພາບພົດ ທຄຕລ, ສະດວກ ສະບາຍ ມ່ວງອອກບູທ ກິດຈະກຳຕ່າງໆ ທີ່ເໝາະສົມ

## ຄຸນລັກສະນະ ແລະ ອອກແບບ

✓ **ດ້ານໜ້າ:**

- ປັກ ໂລໂກ້ ທຄຕລ 3.5x3.5cm

✓ **ດ້ານຫຼັງ:**

- ປັກ ຕົວໜັງສື ສະໂລແກນ ທຄຕລ